# ສົນທິສັນຍາ
# ລະຫວ່າງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ,
# ສາທາລະນະລັດ ປະຊາຊົນຈີນ ແລະ
# ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ
# ວ່າດ້ວຍການກຳນົດຈຸດຄີບເສັ້ນຊາຍແດນສາມປະເທດ

---

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສາທາລະນະລັດ ປະຊາຊົນຈີນ ແລະ ສາທາລະນະລັດ ສັງຄົມນິຍົມຫວຽດນາມ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ "ພາຄີສົນທິສັນຍາສາມຝ່າຍ") ໄດ້ບັນລຸຂໍ້ຕົກລົງ ກ່ຽວກັບການກຳນົດທີ່ຕັ້ງຈຸດຄີບເສັ້ນຊາຍແດນ ລະຫວ່າງ ສາມປະເທດ ດັ່ງນີ້:

## ມາດຕາ 1

ຈຸດຄີບເສັ້ນຊາຍແດນສາມປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສາທາລະນະລັດ ປະຊາຊົນຈີນ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ(ຕໍ່ໄປນີ້ເອີ້ນຫຍໍ້ວ່າ "ຈຸດຄີບເສັ້ນຊາຍແດນສາມປະເທດ") ຕັ້ງຢູ່ເທິງຈຸດສູງ 1864 ແມັດ ຂອງພູຄວານລາຊານ (ຝ່າຍຈີນເອີ້ນວ່າ "ສື ເຊີງ ຕາ ຊານ", ຝ່າຍຫວຽດນາມເອີ້ນວ່າ "ຄວານລາຊານ"). ຈຸດດັ່ງກ່າວຕັ້ງຢູ່ຫ່າງຈາກຈຸດສູງ 1354 ແມັດ ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປທາງທິດຕາເວັນອອກ ອ່ຽງໄປທິດຕາເວັນອອກສ່ຽງເໜືອ 2,08 ກິໂລແມັດ, ຫ່າງຈາກຈຸດສູງ 869 ແມັດ ໃນດິນແດນຂອງ ສາທາລະນະລັດ ປະຊາຊົນຈີນ ໄປທາງທິດໃຕ້ ອ່ຽງໄປທິດ ຕາວັນຕົກສ່ຽງໃຕ້ 2,73 ກິໂລແມັດ, ຫ່າງຈາກຈຸດສູງ 1431 ແມັດ ໃນດິນແດນຂອງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໄປທາງທິດຕາເວັນຕົກ ອ່ຽງໄປທິດຕາເວັນຕົກສ່ຽງເໜືອ 2,32 ກິໂລແມັດ. ຕົວເລກໄລຍະຫ່າງທີ່ກ່າວມາຂ້າງເທິງນີ້ ແມ່ນວັດແທກຈາກແຜນທີ່ຕິດແນບສົນທິສັນຍາສະບັບນີ້.

ຈຸດຄີບເສັ້ນຊາຍແດນສາມປະເທດມີຄ່າພິກັດພູມສາດ ຄື: ເສັ້ນຂະໜານ B= 22°24'02. 295" ເສັ້ນແວງ L= 102°08'38.109", ຄ່າພິກັດໜ້າພຽງ: X= 2480959.98 ແມັດ, Y= 205823.50 ແມັດ. ຄ່າພິກັດທີ່ກ່າວມາຂ້າງເທິງນີ້ ແມ່ນໄດ້ມາຈາກການວັດແທກຢູ່ພູມີປະເທດຕົວຈິງ.

ທີ່ຕັ້ງຂອງຈຸດຄີບເສັ້ນຊາຍແດນສາມປະເທດ ໄດ້ແຕ້ມເຄື່ອງໝາຍເປັນຮູບວົງມົນສີແດງ (ເມັດສີແດງຢູ່ໃຈກາງ) ໃສ່ແຜນທີ່ມາດຕາສ່ວນ 1:50.000 ທີ່ສາມຝ່າຍໄດ້ຕົກລົງຮ່ວມກັນ. ແຜນທີ່ດັ່ງກ່າວຕິດແນບສົນທິສັນຍາສະບັບນີ້ ເປັນພາກສ່ວນໜຶ່ງ ທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້.

## ມາດຕາ 2

1. ພາຄີສົນທິສັນຍາສາມຝ່າຍໄດ້ຮ່ວມກັນປັກຫຼັກໝາຍ 1 ຫຼັກ ທີ່ເຮັດດ້ວຍຫີນກຣານິດໃສ່ຈຸດຄີບເສັ້ນຊາຍແດນສາມປະເທດ.

2. ຝ່າຍໃດຝ່າຍໜຶ່ງບໍ່ມີສິດປ່ຽນແປງທີ່ຕັ້ງ, ລັກສະນະຮູບແບບ ແລະ ຂະໜາດ ຂອງຫຼັກໝາຍຕາມລຳພັງແຕ່ຝ່າຍດຽວ ລວມທັງການປັກຫຼັກໝາຍຊາຍແດນອື່ນໆ ອີກ.

3. ພາຄີສົນທິສັນຍາສາມຝ່າຍມີໜ້າທີ່ຮ່ວມມືຊຶ່ງກັນ ແລະ ກັນ ໃນການປົກປັກຮັກສາຫຼັກໝາຍ ຊາຍແດນ ແລະ ໃຊ້ມາດຕະການທີ່ຈຳເປັນ ເພື່ອປ້ອງກັນບໍ່ໃຫ້ຫຼັກໝາຍຊາຍແດນຖືກເຄື່ອນຍ້າຍ, ເປ່ເພ ຫຼື ຖືກທຳລາຍ.

4. ຖ້າຫາກຝ່າຍໃດຝ່າຍໜຶ່ງ ພົບເຫັນຫຼັກໝາຍຖືກເຄື່ອນຍ້າຍ, ເປ່ເພ ຫຼື ຖືກທຳລາຍຕ້ອງແຈ້ງໃຫ້ອີກສອງຝ່າຍຊາບ ຢ່າງທັນການ. ພາຄີສົນທິສັນຍາສາມຝ່າຍຕ້ອງດຳເນີນການຟື້ນຟູ, ສ້ອມແປງ ຫຼື ປັກຫຼັກໝາຍໃໝ່ຢູ່ທີ່ຕັ້ງເດີມ ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 1 ຂອງສົນທິສັນຍາສະບັບນີ້ ແລະ ຕາມລັກສະນະຮູບແບບ, ຂະໜາດ ທີ່ໄດ້ກຳນົດໄວ້ໃນ "ຮູບແບບຫຼັກໝາຍຈຸດຄົບເສັ້ນຊາຍແດນ ລະຫວ່າງ ລາວ-ຈີນ-ຫວຽດນາມ" ທີ່ຕິດແນບສົນທິສັນຍາສະບັບນີ້, ພ້ອມທັງເຮັດບົດບັນທຶກຮ່ວມກັນໄວ້.

<u>ມາດຕາ 3</u>

ເພື່ອເຮັດໃຫ້ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊ້, ພາຄີສົນທິສັນຍາສາມຝ່າຍຕ້ອງດຳເນີນຕາມຂັ້ນຕອນກົດໝາຍພາຍໃນປະເທດຂອງຕົນໃຫ້ເປັນທີ່ຮຽບຮ້ອຍ, ຫຼັງຈາກນັ້ນ ຈຶ່ງແຈ້ງໃຫ້ກັນ ຊາບຢ່າງເປັນລາຍລັກອັກສອນ.

ສົນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ ນັບແຕ່ມື້ ທີ່ສົ່ງຈົດໝາຍແຈ້ງໃຫ້ກັນຊາບ ສະບັບສຸດທ້າຍ ເປັນຕົ້ນໄປ.

ສົນທິສັນຍາສະບັບນີ້ ລົງນາມທີ່ ນະຄອນຫຼວງປັກກິ່ງ ໃນວັນທີ 10 ຕຸລາ 2006, ເຮັດເປັນສາມຕົ້ນສະບັບ, ແຕ່ລະສະບັບເປັນພາສາລາວ, ພາສາຈີນ ແລະ ພາສາຫວຽດ, ທັງສາມພາສາມີຄຸນຄ່າເທົ່າທຽມກັນ.

ຜູ້ຕາງໜ້າທີ່ມີອຳນາດເຕັມ
ແຫ່ງ ສາທາລະນະລັດ
ປະຊາທິປະໄຕ ປະຊາຊົນລາວ

ພົງສະຫວັດ ບຸບຜາ
ລັດຖະມົນຕີຊ່ວຍວ່າການ
ກະຊວງການຕ່າງປະເທດ

ຜູ້ຕາງໜ້າທີ່ມີອຳນາດເຕັມ
ແຫ່ງ ສາທາລະນະລັດ
ປະຊາຊົນຈີນ

ອູ ຕ້າ ເວີຍ
ລັດຖະມົນຕີຊ່ວຍວ່າການ
ກະຊວງການຕ່າງປະເທດ

ຜູ້ຕາງໜ້າທີ່ມີອຳນາດເຕັມ
ແຫ່ງ ສາທາລະນະລັດ
ສັງຄົມນິຍົມ ຫວຽດນາມ

ຫວູ ຢຸ້ງ
ລັດຖະມົນຕີຊ່ວຍວ່າການ
ກະຊວງການຕ່າງປະເທດ

# ຮູບແບບຫຼັກໝາຍຈຸດຄີບເສັ້ນຊາຍແດນລະຫວ່າງສາມປະເທດ ລາວ-ຈີນ-ຫວຽດນາມ



ກາໝາຍຊາດເຮັດດ້ວຍໂລຫະ
ເສັ້ນຜ່າກາງ 30 ຊມ

